**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 355/ລບ
ນະຄອນຫຼວງວຽງຈັນ, ວັນທີ 20.11-2023

# ດຳລັດ
# ວ່າດ້ວຍການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1000/ອຄ, ລົງວັນທີ 23 ມິຖຸນາ 2023.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິນຄ້ານຳໃຊ້ສອງດ້ານ ເພື່ອໃຫ້ມີຄວາມສະດວກ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບ ປະກັນຄວາມປອດໄພ, ໂປ່ງໃສ, ຮັກສາສະຖຽນລະພາບ ແລະ ຄວາມໝັ້ນຄົງ, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ.

### ມາດຕາ 2 ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ

ສິນຄ້ານຳໃຊ້ສອງດ້ານ ແມ່ນ ສິນຄ້າ ແລະ ເຕັກໂນໂລຊີ ທີ່ສາມາດນຳໃຊ້ໄດ້ ໃນທາງພົນລະເຮືອນ ແລະ ທາງການທະຫານ ຊຶ່ງອາດຖືກນຳໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ.

ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ແມ່ນ ການຈັດຕັ້ງປະຕິບັດ ບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງອອກ, ຜ່ານແດນ ແລະ ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ເຕັກໂນໂລຊີ** ໝາຍເຖິງ ຂໍ້ມູນທີ່ນຳໃຊ້ ສຳລັບການອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ສິນຄ້ານຳໃຊ້ສອງດ້ານ ຊຶ່ງກວມເອົາຂອບແວ ແລະ ຂໍ້ມູນທາງດ້ານເຕັກນິກເປັນຕົ້ນ ແບບພິມຂຽວ, ແມ່ແບບ,

ແຜນວາດ, ແຜນຜັງ, ສູດ, ຕາຕະລາງ, ມາດຕະຖານ, ແບບທາງດ້ານວິສະວະກຳ, ຄູ່ມື, ຄຳແນະນຳ ທີ່ຢູ່ໃນຮູບແບບສິ່ງພິມ ຫຼື ເອເລັກໂຕຣນິກ;

2. **ອາວຸດທຳລາຍລ້າງຜານ** ໝາຍເຖິງ ອາວຸດນິວເຄຼຍ, ອາວຸດເຄມີ, ອາວຸດຊີວະພາບ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. **ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ** ໝາຍເຖິງ ອຸປະກອນ ຫຼື ລະບົບ ທີ່ຖືກອອກແບບສະເພາະ ເພື່ອນຳສົ່ງອາວຸດທຳລາຍລ້າງຜານ ເປັນຕົ້ນ ຂີປະນາວຸດ, ລູກສອນໄຟ, ລະບົບນຳສົ່ງອື່ນ;

4. **ຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ** ໝາຍເຖິງ ວິສາຫະກິດ ທີ່ດຳເນີນກິດຈະການກ່ຽວກັບ ການສົ່ງອອກ, ຜ່ານແດນ ແລະ ການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

5. **ການສົ່ງອອກ** ໝາຍເຖິງ ການສົ່ງສິນຄ້ານຳໃຊ້ສອງດ້ານ ອອກຈາກ ສປປ ລາວ ລວມທັງການສົ່ງອອກຊົ່ວຄາວ ແລະ ການສະໜອງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

6. **ການຜ່ານແດນ** ໝາຍເຖິງ ການເຄື່ອນຍ້າຍສິນຄ້ານຳໃຊ້ສອງດ້ານ ຈາກປະເທດໜຶ່ງ ຜ່ານ ສປປ ລາວ ໄປປະເທດທີສາມ;

7. **ການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ** ໝາຍເຖິງ ການເຄື່ອນໄຫວຂອງວິສາຫະກິດ ຢູ່ ສປປ ລາວ ເພື່ອໃຫ້ບໍລິການ ເຈລະຈາ, ຈັດຫາ ຫຼື ອຳນວຍຄວາມສະດວກ ໃຫ້ແກ່ການເຮັດທຸລະກຳການຄ້າສິນຄ້ານຳໃຊ້ສອງດ້ານ ຈາກປະເທດໜຶ່ງ ໄປຫາ ອີກປະເທດໜຶ່ງ ຊຶ່ງການບໍລິການດັ່ງກ່າວເກີດຂຶ້ນ ຢູ່ໃນ ຫຼື ນອກ ດິນແດນ ສປປ ລາວ;

8. **ໃບອະນຸຍາດ** ໝາຍເຖິງ ເອກະສານຮັບຮອງ ທີ່ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ແກ່ວິສາຫະກິດ ເພື່ອອະນຸຍາດ ໃຫ້ສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ຕາມປະເພດ, ຈຳນວນ ແລະ ປະເທດປາຍທາງ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;

9. **ໃບຢັ້ງຢືນການບໍລິການນາຍໜ້າ** ໝາຍເຖິງ ເອກະສານ ທີ່ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ແກ່ວິສາຫະກິດ ເພື່ອຢັ້ງຢືນ ແລະ ຕິດຕາມການເຄື່ອນໄຫວ ໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

10. **ໃບຢັ້ງຢືນຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ** ໝາຍເຖິງ ເອກະສານຢັ້ງຢືນ ກ່ຽວກັບຂໍ້ມູນລາຍລະອຽດຂອງຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ ແລະ ຈຸດປະສົງຂອງການນຳໃຊ້ ຊຶ່ງຖືກຮັບຮອງໂດຍໜ່ວຍງານຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ຫຼື ໜ່ວຍງານ ທີ່ມີສິດອຳນາດຂອງປະເທດປາຍທາງ ທີ່ນຳເຂົ້າສິນຄ້ານຳໃຊ້ສອງດ້ານ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ**

ລັດ ຖືສຳຄັນ ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ດ້ວຍການວາງນະໂຍບາຍ, ລະບຽບການ ແລະ ມາດຕະການ ລວມທັງການສະໜອງ ງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ພັດທະນາບຸກຄະລາກອນສຳລັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ໃຫ້ດຳເນີນໄດ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 5 ຫຼັກການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ**

ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
2. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ;
3. ຮັບປະກັນຄວາມປອດໄພ ຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ;

4. ຮັບປະກັນການອຳນວຍຄວາມສະດວກທາງການຄ້າ;

5. ຮັບປະກັນຄວາມ ສະເໝີພາບ, ໂປ່ງໃສ, ຍຸຕິທຳ, ເປີດເຜີຍ ແລະ ສາມາດກວດສອບໄດ້.

### ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບສິນຄ້ານຳໃຊ້ສອງດ້ານ ຢູ່ ສປປ ລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການຍົກລະດັບທາງດ້ານວິຊາການ ໃຫ້ບຸກຄະລາກອນ, ປະຕິບັດສິນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ໝວດທີ 2
## ບັນຊີສິນຄ້ານຳໃຊ້ສອງດ້ານ

### ມາດຕາ 8 ບັນຊີສິນຄ້ານຳໃຊ້ສອງດ້ານ

ບັນຊີສິນຄ້ານຳໃຊ້ສອງດ້ານ ແມ່ນ ລາຍການສິນຄ້ານຳໃຊ້ສອງດ້ານ ທີ່ຈັດແບ່ງຕາມໝວດ ແລະ ລະຫັດສະເພາະຂອງສິນຄ້ານຳໃຊ້ສອງດ້ານ ຊຶ່ງແຕ່ລະລາຍການ ປະກອບມີ ຄຸນລັກສະນະທາງດ້ານເຕັກນິກ ແລະ ອີງປະກອບການນຳໃຊ້ສະເພາະ.

ບັນຊີສິນຄ້ານຳໃຊ້ສອງດ້ານ ປະກອບດ້ວຍ ສິບ ໝວດສິນຄ້າ ດັ່ງນີ້:

1. ວັດສະດຸ, ສະຖານທີ່ ແລະ ອຸປະກອນນິວເຄຼຍ (Nuclear Materials, Facilities, and Equipment);
2. ວັດສະດຸພິເສດ ແລະ ອຸປະກອນທີ່ກ່ຽວຂ້ອງ (Special Materials and Related Equipment);
3. ວັດສະດຸ ເພື່ອການປຸງແຕ່ງ (Materials Processing);
4. ເຄື່ອງເອເລັກໂຕຣນິກ (Electronics);
5. ຄອມພິວເຕີ (Computer);
6. ໂທລະຄົມມະນາຄົມ ແລະ ຄວາມປອດໄພດ້ານຂໍ້ມູນ (Telecommunication and Information Security);
7. ເຊັນເຊີ ແລະ ເລເຊີ (Sensors and Lasers);
8. ລະບົບພາຫາງທາງອາກາດ ແລະ ອຸປະກອນຕິດຕັ້ງເທິງເຮືອບິນ (Navigation and Avionics);
9. ຍານພາຫະນະ ແລະ ອຸປະກອນທາງນ້ຳ (Marine);
10. ວິສະວະກຳອາວະກາດ ແລະ ລະບົບຂັບເຄື່ອນ (Aerospace and Propulsion).

ລາຍລະອຽດ ກ່ຽວກັບສິນຄ້ານຳໃຊ້ສອງດ້ານ ໃນແຕ່ລະໝວດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 9 ການສ້າງ ແລະ ການປັບປຸງ ບັນຊີສິນຄ້ານຳໃຊ້ສອງດ້ານ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງ, ປັບປຸງ ແລະ ປະກາດໃຊ້ ບັນຊີສິນຄ້ານຳໃຊ້ສອງດ້ານ ໃນແຕ່ລະໄລຍະ.

## ໝວດທີ 3
## ການສົ່ງອອກ ແລະ ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ

**ມາດຕາ 10 ການຂໍອະນຸຍາດສົ່ງອອກ ແລະ ຜ່ານແດນສິນຄ້ານຳໃຊ້ສອງດ້ານ**

ວິສາຫະກິດ ທີ່ມີຈຸດປະສົງ ສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ຕ້ອງຂໍອະນຸຍາດ ນຳກະຊວງອຸດ ສາຫະກຳ ແລະ ການຄ້າ ດ້ວຍການປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້.

ສຳລັບການສົ່ງອອກ ຫຼື ຜ່ານແດນ ສິນຄ້າອື່ນ ທີ່ບໍ່ນອນໃນບັນຊີສິນຄ້ານຳໃຊ້ສອງດ້ານ ຕ້ອງດຳເນີນຕາມຂັ້ນຕອນການສົ່ງອອກ ຫຼື ຜ່ານແດນ ຄືກັບສິນຄ້ານຳໃຊ້ສອງດ້ານ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ອົງການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານ ແຈ້ງໃຫ້ຜູ້ສົ່ງອອກ, ຜູ້ຜ່ານແດນ ດຳເນີນການຂໍອະນຸຍາດ ຖ້າຫາກມີຂໍ້ມູນທີ່ເຊື່ອຖືໄດ້ວ່າ ສິນຄ້າດັ່ງກ່າວ ອາດຈະຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

2. ຜູ້ສົ່ງອອກ, ຜູ້ຜ່ານແດນ ໄດ້ຮູ້ ຫຼື ສົງໄສວ່າ ສິນຄ້າດັ່ງກ່າວ ອາດຈະຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ.

**ມາດຕາ 11 ເອກະສານປະກອບການຂໍໃບອະນຸຍາດ**

ເອກະສານປະກອບການ ຂໍໃບອະນຸຍາດ ສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ປະກອບດ້ວຍ:

1. ຄຳຮ້ອງ ຕາມແບບພິມ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;

2. ສຳເນົາໃບທະບຽນວິສາຫະກິດ;

3. ໃບຢັ້ງຢືນຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ;

4. ເອກະສານແຈ້ງຂໍ້ມູນ ລາຍລະອຽດທາງດ້ານເຕັກນິກ, ຄຸນລັກສະນະ ແລະ ການນຳໃຊ້ສິນຄ້ານຳໃຊ້ສອງດ້ານ;

5. ເອກະສານຢັ້ງຢືນແຫຼ່ງທີ່ມາ ແລະ ການໄດ້ມາຂອງສິນຄ້ານຳໃຊ້ສອງດ້ານ ເປັນຕົ້ນ ສັນຍາຊື້ ຂາຍ, ເອກະ ສານສັ່ງຊື້, ໃບແຈ້ງລາຄາ, ບັນຊີສິນຄ້າ ແລະ ບັນທຶກການຈັດສົ່ງ;

6. ໃບຢັ້ງຢືນມາດຕະຖານໄອຊີພີ ໃນກໍລະນີຂໍໃບອະນຸຍາດແບບກວມລວມ;

7. ເອກະສານອື່ນທີ່ຈຳເປັນ.

**ມາດຕາ 12 ການພິຈາລະນາອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງອຸດສະຫະກຳ ແລະ ການຄ້າ ປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພິຈາລະນາອອກໃບອະນຸຍາດ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດໄດ້ ຕ້ອງແຈ້ງເຫດຜົນ ຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດ.

ຂັ້ນຕອນ, ເງື່ອນໄຂ ແລະ ກຳນົດເວລາລະອຽດ ກ່ຽວກັບການພິຈາລະນາອອກໃບອະນຸຍາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 13 ໃບອະນຸຍາດ**

ໃບອະນຸຍາດ ສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ປະກອບດ້ວຍ:

1. ໃບອະນຸຍາດແບບສະເພາະ (Individual License) ສາມາດນຳໃຊ້ໄດ້ຄັ້ງດຽວ ພາຍໃນກຳນົດໜຶ່ງປີ ເພື່ອດຳເນີນການສົ່ງອອກ ຫຼື ຜ່ານແດນ ໜຶ່ງ ຫຼື ຫຼາຍ ປະເພດສິນຄ້ານຳໃຊ້ສອງດ້ານ ໄປຫາໜຶ່ງຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ;

2. ໃບອະນຸຍາດແບບກວມລວມ (Global License) ສາມາດນຳໃຊ້ໄດ້ຫຼາຍຄັ້ງ ພາຍໃນກຳນົດສອງປີ ເພື່ອດຳເນີນການສົ່ງອອກ ຫຼື ຜ່ານແດນ ໜຶ່ງ ຫຼື ຫຼາຍ ປະເພດສິນຄ້ານຳໃຊ້ສອງດ້ານ ໄປຫາ ໜຶ່ງ ຫຼື ຫຼາຍ ຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ.

**ມາດຕາ 14 ການຍົກເລີກໃບອະນຸຍາດ**

ໃບອະນຸຍາດ ຈະຖືກຍົກເລີກ ຕາມກໍລະນີ ດັ່ງນີ້:

1. ຜູ້ໄດ້ຮັບອະນຸຍາດ ສະເໜີຂໍຍົກເລີກ ການສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ດ້ວຍຄວາມສະໝັກໃຈ;

2. ອົງການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານ ມີຂໍ້ມູນທີ່ເຊື່ອຖືໄດ້ວ່າ ສິນຄ້າດັ່ງກ່າວ ຈະຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

3. ຜູ້ໄດ້ຮັບອະນຸຍາດ ບໍ່ປະຕິບັດ ຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

4. ຜູ້ໄດ້ຮັບອະນຸຍາດ ລະເມີດກົດໝາຍ, ລະບຽບການ ແລະ ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5. ຜູ້ໄດ້ຮັບອະນຸຍາດ ມອບໃບອະນຸຍາດ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງ ກ່ຽວກັບການຍົກເລີກໃບອະນຸຍາດ ໃຫ້ຜູ້ໄດ້ຮັບອະນຸຍາດ, ກະຊວງ, ອົງການທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ພາສີ ພາຍໃນກຳນົດ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາອອກແຈ້ງການຍົກເລີກໃບອະນຸຍາດດັ່ງກ່າວ ເປັນຕົ້ນໄປ.

**ມາດຕາ 15 ການສະເໜີພິຈາລະນາ ກ່ຽວກັບການຍົກເລີກໃບອະນຸຍາດ**

ຜູ້ຖືກຍົກເລີກໃບອະນຸຍາດ ສາມາດຍື່ນຄຳຮ້ອງ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ອອກແຈ້ງການຍົກເລີກ ເພື່ອໃຫ້ພິຈາລະນາຄືນ ການຍົກເລີກໃບອະນຸຍາດດັ່ງກ່າວ ຖ້າຫາກສາມາດພິສູດໄດ້ວ່າ ຕົນໄດ້ປະຕິບັດ ຕາມເງື່ອນໄຂ ແລະ ກົດໝາຍ ຢ່າງຖືກຕ້ອງ, ຄົບຖ້ວນ ຫຼື ມີຂໍ້ມູນຫຼັກຖານ ທີ່ຢັ້ງຢືນໄດ້ວ່າເຫດຜົນຂອງການຍົກເລີກໃບອະນຸຍາດນັ້ນ ບໍ່ຖືກຕ້ອງຕາມຄວາມເປັນຈິງ.

**ມາດຕາ 16 ການເກັບຮັກສາເອກະສານ ແລະ ຂໍ້ມູນ**

ຜູ້ສົ່ງອອກ ຫຼື ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງຄົບຊຸດ ເປັນຕົ້ນ ຂໍ້ມູນລາຍລະອຽດຂອງສິນຄ້ານຳໃຊ້ສອງດ້ານ, ຄູ່ສັນຍາຊື້ ຂາຍ, ທຸລະກຳການຄ້າສິນຄ້ານຳໃຊ້ສອງດ້ານ, ການນຳໃຊ້ສຸດທ້າຍ ແລະ ຜູ້ນຳໃຊ້ສຸດທ້າຍ ໄວ້ເປັນເວລາ ຫ້າປີ ນັບແຕ່ວັນທີ່ໄດ້ ສົ່ງອອກ ຫຼື ຜ່ານແດນ ໂດຍສາມາດເກັບຮັກສາໄວ້ ໃນຮູບແບບ ເຈ້ຍ ຫຼື ເອເລັກໂຕຣນິກ.

# ໝວດທີ 4
# ການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານໍາໃຊ້ສອງດ້ານ

**ມາດຕາ 17 ການຂໍໃບຢັ້ງຢືນການບໍລິການນາຍໜ້າ**

ວິສາຫະກິດ ທີ່ມີຈຸດປະສົງ ໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານໍາໃຊ້ສອງດ້ານ ຕ້ອງຂໍໃບຢັ້ງຢືນການບໍລິການນາຍໜ້າ ນໍາກະຊວງອຸດສາຫະກໍາ ແລະ ການຄ້າ ໂດຍປະກອບເອກະສານ ຕາມທີ່ໄດ້ກໍານົດໄວ້ມາດຕາ 18 ຂອງດໍາລັດສະບັບນີ້.

**ມາດຕາ 18 ເອກະສານປະກອບຂໍໃບຢັ້ງຢືນການບໍລິການນາຍໜ້າ**

ເອກະສານປະກອບ ຂໍໃບຢັ້ງຢືນການບໍລິການນາຍໜ້າ ປະກອບດ້ວຍ:

1. ຄໍາຮ້ອງ ຕາມແບບພິມ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ເອກະສານແຈ້ງຂໍ້ມູນລາຍລະອຽດການບໍລິການນາຍໜ້າ;
4. ໃບຢັ້ງຢືນມາດຕະຖານໄອຊີພີ.

**ມາດຕາ 19 ການພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ**

ພາຍຫຼັງໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ ພາຍໃນກໍານົດ ສິບວັນ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນການບໍລິການນາຍໜ້າໄດ້ ຕ້ອງແຈ້ງເຫດຜົນ ຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຂໍໃບຢັ້ງຢືນການບໍລິການນາຍໜ້າ.

ຂັ້ນຕອນ ແລະ ເງື່ອນໄຂລະອຽດ ກ່ຽວກັບການພິຈາລະນາອອກໃບຢັ້ງຢືນການບໍລິການນາຍໜ້າ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ອາຍຸຂອງໃບຢັ້ງຢືນການບໍລິການນາຍໜ້າ**

ໃບຢັ້ງຢືນການບໍລິການນາຍໜ້າ ມີອາຍຸການນໍາໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້ ໂດຍປະກອບເອກະສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງດໍາລັດສະບັບນີ້ ສະເໜີກະຊວງອຸດສາຫະກໍາ ແລະ ການຄ້າ ສາມສິບ ວັນ ກ່ອນວັນໝົດອາຍຸການນໍາໃຊ້.

**ມາດຕາ 21 ການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ**

ຜູ້ໃຫ້ບໍລິການນາຍໜ້າ ຈະຖືກຍົກເລີກໃບຢັ້ງຢືນ ໃນກໍລະນີ ດັ່ງນີ້:

1. ສະເໜີຂໍຍົກເລີກການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານໍາໃຊ້ສອງດ້ານ ດ້ວຍຄວາມສະໝັກໃຈ;
2. ບໍ່ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍຂອງການຢັ້ງຢືນ;
3. ລະເມີດກົດໝາຍ, ລະບຽບການ ແລະ ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ມອບໃບຢັ້ງຢືນການບໍລິການນາຍໜ້າ ໃຫ້ຜູ້ອື່ນນໍາໃຊ້;
5. ບໍ່ປະຕິບັດຕາມເງື່ອນໄຂ ທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນການບໍລິການນາຍໜ້າ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງ ກ່ຽວກັບການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ ໃຫ້ຜູ້ໃຫ້ບໍລິການນາຍໜ້າ ແລະ ກະຊວງ, ອົງການທີ່ກ່ຽວຂ້ອງ ຊາບ ພາຍໃນກຳນົດ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາໄດ້ອອກແຈ້ງການຍົກເລີກ ເປັນຕົ້ນໄປ.

**ມາດຕາ 22 ການສະເໜີພິຈາລະນາ ກ່ຽວກັບການຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ**

ຜູ້ຖືກຍົກເລີກໃບຢັ້ງຢືນການບໍລິການນາຍໜ້າ ສາມາດຍື່ນຄຳຮ້ອງ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ອອກແຈ້ງການຍົກເລີກ ເພື່ອພິຈາລະນາຄືນ ການຍົກເລີກດັ່ງກ່າວ ຖ້າຫາກສາມາດພິສູດໄດ້ວ່າ ຕົນໄດ້ປະຕິບັດ ຕາມເງື່ອນໄຂ ແລະ ກົດໝາຍ ຢ່າງຖືກຕ້ອງ ຫຼື ມີຂໍ້ມູນ ຫຼັກຖານ ທີ່ຢັ້ງຢືນໄດ້ວ່າເຫດຜົນຂອງການຍົກເລີກດັ່ງກ່າວ ບໍ່ຖືກຕ້ອງຕາມຄວາມເປັນຈິງ.

**ມາດຕາ 23 ການເກັບຮັກສາເອກະສານ ແລະ ຂໍ້ມູນ ກ່ຽວກັບການໃຫ້ບໍລິການນາຍໜ້າ**

ຜູ້ໃຫ້ບໍລິການນາຍໜ້າ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານຄົບຊຸດ ເປັນຕົ້ນ ລາຍລະອຽດຂອງສິນຄ້ານຳໃຊ້ສອງດ້ານ, ຄູ່ສັນຍາຊື້ ຂາຍ, ທຸລະກຳການຄ້າສິນຄ້ານຳໃຊ້ສອງດ້ານ, ການນຳໃຊ້ສຸດທ້າຍ ແລະ ຜູ້ນຳໃຊ້ສຸດທ້າຍ ໄວ້ເປັນເວລາ ຫ້າປີ ນັບແຕ່ວັນໄດ້ໃຫ້ບໍລິການ ໂດຍສາມາດເກັບຮັກສາໄວ້ ໃນຮູບແບບ ເຈ້ຍ ຫຼື ເອເລັກໂຕຣນິກ.

## ໝວດທີ 5
## ມາດຕະຖານໄອຊີພີ

**ມາດຕາ 24 ມາດຕະຖານໄອຊີພີ**

ມາດຕະຖານໄອຊີພີ (Internal Compliance Programme - ICP) ແມ່ນ ຂັ້ນຕອນການຄຸ້ມຄອງບໍລິຫານພາຍໃນ ຂອງຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ ເພື່ອຮັບປະກັນຄວາມສອດຄ່ອງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ.

**ມາດຕາ 25 ອົງປະກອບຂອງມາດຕະຖານໄອຊີພີ**

ມາດຕະຖານໄອຊີພີ ມີ ອົງປະກອບ ດັ່ງນີ້:

1. ມີການໃຫ້ຄຳໝັ້ນສັນຍາຂອງຜູ້ບໍລິຫານຂອງວິສາຫະກິດ ວ່າຈະບໍ່ກ່ຽວຂ້ອງກັບການແຜ່ຜາຍອາວຸດທຳລາຍລ້າງຜານ;
2. ມີໜ່ວຍງານ ຫຼື ບຸກຄະລາກອນ ພາຍໃນວິສາຫະກິດ ເພື່ອຮັບຜິດຊອບສະເພາະ ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;
3. ມີລະບົບການຄຸ້ມຄອງ ການສົ່ງອອກ, ຜ່ານແດນ ຫຼື ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;
4. ມີການຝຶກອົບຮົມ ໃຫ້ພະນັກງານ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;
5. ມີລະບົບການກວດສອບພາຍໃນ ແລະ ບໍລິຫານຄວາມສ່ຽງ;
6. ມີລະບົບການເກັບຮັກສາເອກະສານ ແລະ ຂໍ້ມູນ.

**ມາດຕາ 26 ການຂໍໃບຢັ້ງຢືນມາດຕະຖານໄອຊີພີ**

ວິສາຫະກິດ ທີ່ມີຈຸດປະສົງ ຂໍໃບຢັ້ງຢືນມາດຕະຖານໄອຊີພີ ຕ້ອງຍື່ນຄຳຮ້ອງ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງຕ້ອງມີເອກະສານປະກອບ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;

2. ສຳເນົາໃບທະບຽນວິສາຫະກິດ;

3. ໃບອະນຸຍາດດຳເນີນທຸລະກິດ;

4. ກົດລະບຽບຂອງວິສາຫະກິດ;

5. ເອກະສານປະເມີນ ອົງປະກອບຂອງມາດຕະຖານໄອຊີພີເບື້ອງຕົ້ນ ຕາມແບບພິມ.

**ມາດຕາ 27 ການພິຈາລະນາອອກໃບຢັ້ງຢືນມາດຕະຖານໄອຊີພີ**

ພາຍຫຼັງໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງອຸດສະຫະກຳ ແລະ ການຄ້າ ຈະດຳເນີນການລົງກວດກາວິສາຫະກິດ ຕາມອົງປະກອບຂອງມາດຕະຖານໄອຊີພີ ທີ່ກຳນົດໄວ້ໃນ ມາດ 25 ຂອງດຳລັດສະບັບນີ້ ພາຍໃນກຳນົດ ຫ້າວັນ ລັດຖະການ.

ຫຼັງຈາກໄດ້ລົງກວດກາແລ້ວ ເຫັນວ່າວິສາຫະກິດດັ່ງກ່າວ ມີອົງປະກອບຂອງມາດຕະຖານໄອຊີພີ ຢ່າງຄົບຖ້ວນ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນ ພາຍໃນກຳນົດ ສາມວັນ ລັດຖະການ. ໃນກໍລະນີວິສາຫະກິດ ຫາກຍັງບໍ່ມີອົງປະກອບ ຕາມທີ່ໄດ້ກຳນົດໄວ້ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ວິສາຫະກິດ ປັບປຸງ ແກ້ໄຂ ເພີ່ມຕື່ມ.

**ມາດຕາ 28 ອາຍຸຂອງໃບຢັ້ງຢືນມາດຕະຖານໄອຊີພີ**

ໃບຢັ້ງຢືນມາດຕະຖານໄອຊີພີ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ

**ມາດຕາ 29 ສິດຂອງຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ**

ຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ ມີ ສິດ ດັ່ງນີ້:

1. ດຳເນີນການສົ່ງອອກ, ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ຫຼື ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ຕາມທີ່ໄດ້ຮັບອະນຸຍາດ ຫຼື ຢັ້ງຢືນ;

2. ສະເໜີພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີພົບເຫັນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

3. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ການຝຶກອົບຮົມ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ພັນທະຂອງຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ**

ຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ ມີ ພັນທະ ດັ່ງນີ້:

1. ແຈ້ງໃຫ້ອົງການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານ ຊາບ ຫາກສົງໄສວ່າ ສິນຄ້າ ທີ່ຈະສົ່ງອອກ, ຜ່ານແດນ ຫຼື ບໍລິການນາຍໜ້າ ຈະຖືກນຳໄປໃຊ້ ຫຼື ອາດຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

2. ສະໜອງເອກະສານ ແລະ ຂໍ້ມູນ ທີ່ຖືກຕ້ອງຕາມຄວາມເປັນຈິງ ໃນເວລາທີ່ສະເໜີຂໍໃບອະນຸ ຍາດ ຫຼື ໃບຢັ້ງຢືນການບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

3. ປະຕິບັດມາດຕະຖານໄອຊີພີ ສຳລັບການສົ່ງອອກ, ຜ່ານແດນ ແບບກວມລວມ ຫຼື ການໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

4. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

5. ເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

6. ລາຍງານການດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານຂອງຕົນ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຕາມລະບຽບການ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 31 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ

ຫ້າມ ຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ໂດຍບໍ່ຖືກຕ້ອງ ຕາມການອະນຸຍາດ;

2. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ, ປົດເປືອນ ຫຼື ໃຫ້ການເທັດ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ມອບໃບອະນຸຍາດ ຫຼື ໃບຢັ້ງຢືນການບໍລິການນາຍໜ້າ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

5. ສ້າງອຸປະສັກ, ກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້;

6. ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ສິນບົນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 32 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ ຫຼື ໜ້າທີ່ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການສົ່ງອອກ, ຜ່ານແດນ, ໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ໂດຍບໍ່ສອດຄ່ອງກັບດຳລັດສະບັບນີ້;

2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕໍ່ຜູ້ດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ ໂດຍບໍ່ຖືກຕ້ອງ;

4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ຫຼື ບິດເບືອນຄວາມຈິງ;

5. ປົດບັງ, ປົກປ້ອງ ຫຼື ໃຫ້ຄວາມຮ່ວມມື ແກ່ຜູ້ກະທຳຜິດ;

6. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

7. ເປີດເຜີຍຄວາມລັບທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ;

8. ທວງເອົາ, ຮຽກເອົາ, ຮັບເອົາ ສິນບົນ ຫຼື ຜົນປະໂຫຍດອື່ນ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານ

**ມາດຕາ 33 ອົງການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບ ໃນການຄຸ້ມຄອງ ແລະ ກວດກາສິນຄ້ານຳໃຊ້ສອງດ້ານໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບ ກັບກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ເພື່ອສະເໜີ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

4. ຄົ້ນຄວ້າ ສ້າງ, ປັບປຸງ ແລະ ປະກາດໃຊ້ ບັນຊີສິນຄ້ານຳໃຊ້ສອງດ້ານ;

5. ຄົ້ນຄວ້າ ແລະ ພັດທະນາ ລະບົບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

6. ອອກ, ຍົກເລີກ ໃບອະນຸຍາດ, ໃບຢັ້ງຢືນການບໍລິການນາຍໜ້າ ແລະ ໃບຢັ້ງຢືນມາດຕະຖານໄອຊີພີ;

7. ສັງລວມ ແລະ ແຈ້ງ ລາຍຊື່ປະເທດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກຂວ້ຳບາດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

8. ປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບ ຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ ການສົ່ງອອກ, ຜ່ານແດນ ສິນຄ້ານຳໃຊ້ສອງດ້ານທີ່ເກີດຂຶ້ນ ຢູ່ໃນອານາເຂດພາສີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ;

2. ປະສານສົມທົບ ກັບກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປະເມີນ ແລະ ຄວບຄຸມຄວາມສ່ຽງ, ກວດສອບ ແລະ ຢັ້ງຢືນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ຕາມດຳລັດສະບັບນີ້;

3. ຍຶດ, ອາຍັດ ສິນຄ້າ ແລະ ຮຽກຮ້ອງ ໃຫ້ຜູ້ດຳເນີນທຸລະກິດ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ສະໜອງຂໍ້ມູນ ຫຼື ຫຼັກຖານ ເພີ່ມຕື່ມ ໃນກໍລະນີ ສົງໄສ ຫຼື ມີຂໍ້ມູນ ທີ່ເຊື່ອຖືໄດ້ວ່າ ສິນຄ້າດັ່ງກ່າວ ຈະຖືກນຳໄປ

ໃຊ້ ຫຼື ອາດຖືກນຳໄປໃຊ້ ໂດຍກົງ ຫຼື ທາງອ້ອມ ເພື່ອອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ;

4. ປະຕິບັດຕາມບົດແນະນຳ ໃນການຈັດຕັ້ງປະຕິບັດ ການຄຸ້ມຄອງສິນຄ້າຍຸດທະສາດ (Strategic Trade Control Enforcement Implementing Guideline) ທີ່ອົງການພາສີໂລກ ກຳນົດອອກ ໃນແຕ່ລະໄລຍະ;

5. ລາຍງານ ແລະ ສະໜອງສະຖິຕິ ການສົ່ງອອກ, ຜ່ານແດນ ສິນຄ້ານຳໃຊ້ສອງດ້ານ ໃຫ້ກະຊວງອຸດສາ ຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 36 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ

ກະຊວງຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງລາຍຊື່ ປະເທດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກຂວ້ຳບາດ ຕາມຍັດຕິຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;

2. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ຂອງ ສປປ ລາວ ໃຫ້ອົງການສະຫະປະຊາຊາດ ຕາມພັນທະ ທີ່ກຳນົດໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 37 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ

ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບສິນຄ້ານຳໃຊ້ສອງດ້ານ ທີ່ເຫັນວ່າ ສາມາດນຳໄປ ອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;

2. ມີຄຳເຫັນ ກ່ຽວກັບຄຸນລັກສະນະທາງດ້ານເຕັກນິກການທະຫານ ຂອງສິນຄ້ານຳໃຊ້ສອງດ້ານ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 38 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ

ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງຂໍ້ມູນ ຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຄວາມສ່ຽງ ຈະນຳເອົາສິນຄ້ານຳໃຊ້ສອງດ້ານນຳໄປ ອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;

2. ມີຄຳເຫັນ ກ່ຽວກັບຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ ແລະ ຜູ້ນຳໃຊ້ສິນຄ້ານຳໃຊ້ສອງດ້ານສຸດທ້າຍ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 39 ສິດ ແລະ ໜ້າທີ່ຂອງທະນາຄານ ແຫ່ງ ສປປ ລາວ

ທະນາຄານ ແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງຂໍ້ມູນທາງດ້ານການເງິນ ກ່ຽວກັບສິນຄ້ານຳໃຊ້ສອງດ້ານ ທີ່ມີຄວາມສ່ຽງ ໃນການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;

2. ປະສານກັບ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະຫຼຸບ ສັງລວມ ຂໍ້ມູນຮອບດ້ານ ກ່ຽວກັບການຈັດຕັ້ງປະຕິບັດ ການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ ຂອງ ສປປ ລາວ ແລ້ວລາຍງານ ໃຫ້ອົງການຈັດ ຕັ້ງສາກົນທີ່ກ່ຽວຂ້ອງກັບວຽກງານຕ້ານ, ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການສະໜອງທຶນ ໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ເປັນແຕ່ລະໄລຍະ;

3. ມີຄຳເຫັນ ກ່ຽວກັບທຸລະກຳທາງດ້ານການເງິນ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 40 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບສິນຄ້ານຳໃຊ້ສອງດ້ານ ທີ່ມີຄວາມສ່ຽງ ນຳໄປອອກແບບ, ພັດທະນາ, ຜະລິດ ຫຼື ນຳໃຊ້ ເປັນອາວຸດທຳລາຍລ້າງຜານ ຫຼື ລະບົບນຳສົ່ງຂອງອາວຸດທຳລາຍລ້າງຜານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ;

2. ມີຄຳເຫັນ ກ່ຽວກັບຄຸນລັກສະນະທາງດ້ານເຕັກນິກຂອງສິນຄ້ານຳໃຊ້ສອງດ້ານ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ;

3. ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 41 ເນື້ອໃນກວດກາ

ການກວດກາສິນຄ້ານຳໃຊ້ສອງດ້ານ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

2. ການປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການຄຸ້ມຄອງສິນຄ້ານຳໃຊ້ສອງດ້ານ.

### ມາດຕາ 42 ຮູບແບບກວດກາ

ການກວດກາວຽກງານສິນຄ້ານຳໃຊ້ສອງດ້ານ ມີຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

# ໝວດທີ 9
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 43 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 44 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 45 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຈະຖືກ ກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 46 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 47 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າ ທີ່ຖືກກວດພົບ ຫຼື ມູນຄ່າການບໍລິການ ສຳລັບການດຳເນີນການສົ່ງອອກ, ຜ່ານແດນ ແລະ ໃຫ້ບໍລິການນາຍໜ້າ ທີ່ຕິດພັນກັບສິນຄ້ານຳໃຊ້ສອງດ້ານ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າ ທີ່ຖືກກວດພົບ ຫຼື ມູນຄ່າການບໍລິການ ສຳລັບການມອບ ໃບອະນຸຍາດ ຫຼື ໃບຢັ້ງຢືນໃຫ້ບໍລິການນາຍໜ້າ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້.

**ມາດຕາ 48 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ແລະ ໄດ້ກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 49 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳທາງອາຍາ ຈະຖືກລົງໂທດ ຕາມກົດໝາຍ.

# ໝວດທີ 10
# ບົດບັນຍັດສຸດທ້າຍ

**ມາດຕາ 50 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ມັງກອນ 2024 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**